ສຳນັກງານ ຄຄຊ
ເລກທີ 0443
ວັນທີ 26 APR 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 17 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 ເມສາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ **02-06/04/2018** ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I.** ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II.** ການເຄື່ອນໄຫວວຽກງານວິຊາສະເພາະ

**1.** ສະພາບເສດຖະກິດເງິນຕາສາກົນ

**1.1** ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,69% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກການສັ່ງຊື້ຂອງໂຮງງານ ຂອງເດືອນ 02/2018 ເພີ່ມຂຶ້ນ 1,2% ຈາກທີ່ໄດ້ຫຼຸດລົງ 1,3% ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ມີຈຳນວນຫຼຸດລົງຢູ່ທີ່ 1,81 ລ້ານຄົນ ຂອງອາທິດທີ 24/03/2018 ຈາກ 1,87 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ **26-30/03/2018** | ອາທິດນີ້ **02-06/04/2018** | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2326 | 1,2242 | 0,69% |
| ເຢນ/ໂດລາ | 106,15 | 107,32 | -1,09% |
| ບາດ/ໂດລາ | 31,18 | 31,26 | -0,26% |
| ເປໂຊ/ໂດລາ | 52,19 | 52,09 | 0,19% |
| ຣູເປັຍ/ໂດລາ | 13.760,00 | 13.770,00 | -0,07% |
| ໂດລາສິງກະໂປ/ໂດລາ | 1,3097 | 1,3176 | -0,60% |
| ຢວນ/ໂດລາ | 6,2741 | 6,3045 | -0,48% |

**1.2** ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,51% ຈາກ 64,89 ໂດລາ/ບາເຣວ ມາເປັນ 63,26 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນກາຊວນຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ 0,54 ລ້ານບາເຣວ ຂອງອາທິດທີ 30/03/2018;

- ສໍາລັບລາຄາຄໍາເພີ່ມຂຶ້ນ 0,13% ຈາກ 1.324,00 ໂດລາ/ອອນ ມາເປັນ 1.325,76 ໂດລາ/ອອນ ເນື່ອງຈາກການຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,09% ແລະ ອ່ອນຄ່າລົງ 0,11% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,14% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,37% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 30/03/2018 | | | ອາທິດນີ້ 06/04/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.310,86 | 8.331,16 | 8.316,77 | 8.308,85 | 8.332,32 | 8.324,18 | 0,02% | -0,01% | -0,09% | -0,09% | -0,06% | -0,14% |
| ບາດ | 266,49 | 268,09 | 267,57 | 266,93 | 268,20 | 267,86 | -0,16% | -0,04% | -0,11% | -4,46% | -4,27% | -4,37% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 0,67% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,68%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,82% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,91%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (30/03-05/04/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 17,63 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 43,98 ລ້ານໂດລາ ແລະ ຂາຍໂດລາໄດ້ 26,35 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 457,76 ລ້ານບາດ (ໃນນີ້ຊື້ບາດໄດ້ 249,91 ລ້ານບາດ ແລະ ຂາຍບາດໄດ້ 707,67 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 14,18% ແຕ່ ເງິນບາດ ເພີ່ມຂຶ້ນ 5,86%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈໍານວນ 1,10 ລ້ານໂດລາ ແລະ ເງິນບາດ ຈໍານວນ 16,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 5,22 ລ້ານໂດລາ ແລະ ເງິນບາດ ຈໍານວນ 91,47 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ທຫລ ຂາຍເງິນໂດລາ ຈໍານວນ 225,14 ລ້ານບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 23-29/03/2018 | | ອາທິດນີ້ 30/03-05/04/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **43,16** | **215,25** | **43,98** | **249,91** | **1,90%** | **16,10%** |
| - ທ/ຄທຸລະກິດລັດ | 11,30 | 60,82 | 14,36 | 100,40 | 27,08% | 65,08% |
| - ທ/ຄທຸລະກິດອື່ນໆ | 31,86 | 154,43 | 29,62 | 149,51 | -7,03% | -3,19% |
| **2, ການຂາຍເງິນຕາຕ່າງປະເທດ** | **38,79** | **689,35** | **26,35** | **707,67** | **-32,07%** | **2,66%** |
| - ທ/ຄທຸລະກິດລັດ | 16,78 | 163,09 | 10,77 | 302,07 | -35,82% | 85,22% |
| - ທ/ຄທຸລະກິດອື່ນໆ | 22,01 | 526,26 | 15,58 | 405,60 | -29,21% | -22,93% |
| **ຊື້-ຂາຍສຸດທິທທກ** | **4,37** | **-474,10** | **17,63** | **-457,76** | **303,43%** | **-3,45%** |
| - ຜິດດ່ຽງຊື້-ຂາຍ | 10,13% | -220,26% | 40,09% | -183,17% | 295,76% | -16,84% |
| - **ມູນຄ່າການຊື້-ຂາຍ** | **81,95** | **904,60** | **70,33** | **957,58** | **-14,18%** | **5,86%** |
| **3,ການຊື້-ຂາຍລະຫວ່າງທຫລກັບ ທທກ** | **-6,22** | **-26,00** | **-1,10** | **-16,00** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,40 | 0,00 | | |
| - ທຫລຂາຍໃຫ້ທທກ | 6,22 | 26,00 | 1,50 | 16,00 | | |
| **4,ຊື້-ຂາຍລະຫວ່າງທທກດ້ວຍກັນ** | **4,72** | **88,30** | **5,22** | **91,47** | | |
| **5,ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **-225,14** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 225,14 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2018 ຄາດວ່າຈະຢູ່ໃນລະດັບ 2,05% (ຕົວເລກຄາດຄະເນ).

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 330,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 59,80 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 46,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 78,74 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 750 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 98 ສະບັບ ເທົ່າກັບ 11,56% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 531,93 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 143,81 ຕື້ກີບ ເທົ່າກັບ 37,05%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (30/03-05/04/2018) ມີທັງໝົດ 3,971 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3,866 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 203 ຕື້ກີບ ຈາກ 1.5650,27 ຕື້ກີບ ມາເປັນ 1.763,47 ຕື້ກີບ ເທົ່າກັບ 13,02%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 105 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ ຈຳນວນ 264,09 ຕື້ກີບ ຈາກ 139,48 ຕື້ກີບ ມາເປັນ 403,57 ຕື້ກີບ ເທົ່າກັບ 189,33%;

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ,</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 927,17 ຈຸດ ຫຼຸດລົງ ຈາກ 936,47 ຈຸດ ຫຼື ເທົ່າກັບ 0,99% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 813.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,82 ຕື້ກີບ ເພີ່ມຂຶ້ນ 240,38% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 37,04% ຂອງມູນຄ່າການຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1,000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 202.300 | 1.185.515.000 | 6.100 | **799.700** | **4.770.090.000** | **5.050** | 295,30 | 302,36 | -1.050 | -17,21 |
| **EDL-GEN** | 52.900 | 228.590.000 | 4.500 | **11.000** | **49.635.000** | **4.550** | -79,21 | -78,29 | 50 | 1,11 |
| **LWPC** | 200 | 800.000 | 4.000 | - | - | **4.000** | -100,00 | -100,00 | - | 0,00 |
| **PTL** | 900 | 1.545.000 | 1.700 | **500** | **925.000** | **1.700** | -44,44 | -40,13 | - | 0,00 |
| **SVN** | - | - | 2.900 | - | - | **2.900** | - | - | - | 0,00 |
| **PCD** | - | - | 1.400 | **2.100** | **2.945.000** | **1.450** | - | - | 50 | 3,57 |
| **LCC** | 300 | 735.000 | 2.450 | **100** | **245.000** | **2.400** | -66,67 | -66,67 | -50 | -2,04 |
| ທັງໝົດ | 256.600 | 1.417.185.000 | | **813.400** | **4.823.840.000** | | 216,99 | 240,38 | - | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

**ສຳເລັດການເຂົ້າຮ່ວມກອງປະຊຸມ, ແລະ ຈັດກອງປະຊຸມຕ່າງໆ:** ❶ ກອງປະຊຸມຮ່ວມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າທະນາຄານກາງອາຊຽນ ແລະ ກອງປະຊຸມກ່ຽວຂ້ອງອື່ນໆ ທີ່ (ປະເທດສິງກະໂປ), ❷ ກອງປະຊຸມສະຫຼຸບສ່ອງແສງປະຈຳໄຕມາດ 1 ປີ 2018 ຂອງຄະນະບໍລິຫານງານ ຊປປລ ກະຊວງ, ອົງການອ້ອມຂ້າງສູນກາງ ຊປປລ ແລະ ນະຄອນຫຼວງວຽງຈັນ ທີ່ (ສຫດ), ❸ ກອງປະຊຸມວຽກງານກວດກາທະນາຄານແຫ່ງ ສປປ ລາວ ທີ່ (ສຫດ), ❹ ກອງປະຊຸມຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບປັບປຸງ ທີ່ (ສຫດ), ❺ ກອງປະຊຸມຄະນະກຳມະການເຮັດວຽກກັບອົງການກວດສອບແຫ່ງລັດ ທີ່ (ທຫລ) ແລະ ❻ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກຫ້ອງການ, ໜ່ວຍພັກກົມນະໂຍບາຍເງິນຕາ, ໜ່ວຍພັກສະຖາບັນການທະນາຄານ, ໜ່ວຍພັກສຳນັກງານຂໍ້ມູນຕ້ານການຟອກເງິນ, ໜ່ວຍພັກກົມຄຸ້ມຄອງສະຖາບັນການເງິນ ແລະ ໜ່ວຍພັກກອງທຶນປົກປ້ອງຜູ້ຝາກເງິນ;

- ທ່ານຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ຕ່າງປະເທດ;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະຜູ້ແທນຂອງທະນາຄານເພື່ອການກະເສດຂອງປະເທດໄທ.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມນຳສະເໜີຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ທີ່ (ທຫລ), ❷ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❸ ກອງປະຊຸມຜ່ານເນື້ອໃນຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ຕໍ່ຄະນະປະຈຳສະພາແຫ່ງຊາດ, ❹ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກກົມຄຸ້ມຄອງທະນາຄານທຸລະກິດ, ໜ່ວຍພັກກົມບໍລິການທະນາຄານ, ໜ່ວຍພັກກົມບັນຊີແລະການເງິນ ແລະ ໜ່ວຍພັກຮາກຖານທະນາຄານນະໂຍບາຍ, ❺ ພິທີການຮຽນສະໜັບສະໜູນພັກ ແລະ ແກ້ໄຂຂໍ້ຂ້ອງໃຈກ່ຽວກັບບາງເນື້ອໃນ ທີ່ (ທສກ) ແລະ ❻ ພິທີອວຍພອນປີໃໝ່ ແລະ ບາສີສູ່ຂວັນ ເນື່ອງໃນໂອກາດຕ້ອນຮັບປີໃໝ່ລາວ ພສ 2561 ທີ່ (ທຫລ).

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ